ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ເລກທີ: 48 /ຫກ
ນະຄອນຫຼວງວຽງຈັນ, ວັນທີ: 27 ພະຈິກ 2018

ສຳນັກງານ ຄຄຊ
ເລກທີ 1255
ວັນທີ 29 NOV 2018
ໂທລະສັບ 021 217770

# ບົດລາຍງານ
## ການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ
## ປະຈຳອາທິດທີ 05-09/11/2018 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

### I. ວຽກງານການເມືອງແນວຄິດ

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

### II. ການເຄື່ອນໄຫວວຽກງານວິຊາສະເພາະ

### 1. ສະພາບເສດຖະກິດເງິນຕາສາກົນ

### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດແຂງຄ່າຂຶ້ນ 0,88% ທຽບໃສ່ເອີໂຣ ເນື່ອງຈາກຕົວເລກດັດຊະນີຂະແໜງການບໍລິການ ຂອງສະຫະລັດອາເມລິກາ ໃນເດືອນ 10/2018 ຢູ່ທີ່ລະດັບ 60,3 ຈຸດ ຊຶ່ງສູງກວ່າຕົວເລກທີ່ນັກວິເຄາະໄດ້ຄາດຄະເນໄວ້ວ່າຈະຢູ່ທີ່ລະດັບ 59,0 ຈຸດ ຈາກລະດັບ 61,6 ຈຸດ ໃນເດືອນຜ່ານມາ. ພ້ອມກັນນັ້ນ, ຕົວເລກຈຳນວນປະຊາຊົນທີ່ຂໍສະຫວັດດີການວ່າງງານຄັ້ງທຳອິດ ຂອງອາທິດທີ 03/11/2018 ມີຈຳນວນ 214,000 ຄົນ ຈາກຈຳນວນ 215,000 ຄົນ ໃນອາທິດຜ່ານມາ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 29/10-01/11/2018 | ອາທິດນີ້ 02-08/11/2018 | ເປີເຊັນ ແຂງຄ່າ(+) / ອ່ອນຄ່າ(–) |
|---|---|---|---|
| ໂດລາ/ເອີໂຣ | 1,1437 | 1,1337 | 0,88% |
| ເຢນ/ໂດລາ | 112,76 | 113,87 | -0,97% |
| ບາດ/ໂດລາ | 32,810 | 33,010 | -0,61% |
| ເປໂຊ/ໂດລາ | 53,03 | 53,03 | -0,01% |
| ຣູເປັຍ/ໂດລາ | 14.950,00 | 14.680,00 | 1,84% |
| ໂດລາສິງກະໂປ/ໂດລາ | 1,3717 | 1,3780 | -0,46% |
| ຢວນ/ໂດລາ | 6,8895 | 6,9466 | -0,82% |

1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

- ລາຄານ້ຳມັນ ຫຼຸດລົງ 5,37% ເປັນ 60,21 ໂດລາ/ບາເຣວ ພາຍຫຼັງຄັງສຳຮອງນ້ຳມັນດິບຂອງ ສະຫະລັດອາເມລິກາ ເພີ່ມຂຶ້ນ ມາຢູ່ໃນລະດັບ 5,78 ລ້ານບາເຣວ ໃນອາທິດທີ 02/11/2018 ຈາກເພີ່ມຂຶ້ນຮອດລະດັບ 3,22 ລ້ານບາເຣວ ໃນອາທິດຜ່ານມາ;
- ລາຄາຄຳ ຫຼຸດລົງ 1,23% ເປັນ 1.220,23 ໂດລາ/ອອນ ເນື່ອງຈາກຄ່າຂອງເງິນໂດລາແຂງຄ່າ ເຮັດໃຫ້ນັກລົງທຶນເທຂາຍຄຳ ແລະ ສັນຍາຊື້-ຂາຍຄຳ ເພື່ອເກັບກຳໄລ.

2. ສະພາບການຊື້-ຂາຍອັດຕາແລກປ່ຽນ

2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,01% ແລະ ອ່ອນຄ່າລົງ 0,13% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າເງິນກີບອ່ອນຄ່າລົງ 3,80% ທຽບໃສ່ສະກຸນເງິນໂດລາ ແລະ ອ່ອນຄ່າລົງ 4,09% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 29/10-02/11/2018 | | | ອາທິດນີ້ 05-09/11/2018 | | | %ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະຄານ[1] | | | | | | | | | | | | |
| ໂດລາ | 8,626,18 | 8.654,83 | 8.640,15 | 8,627,57 | 8.655,77 | 8.641,17 | -0,02% | -0,01% | -0,01% | -3,78% | -3,80% | -3,80% |
| ບາດ | 266,76 | 267,93 | 267,43 | 264,89 | 267,62 | 267,07 | 0,71% | 0,12% | -0,13% | -3,72% | -4,06% | -4,09% |

2.2 ສະພາບຖານເງິນຕາແລະປະລິມານເງິນ M2

- ຖານເງິນຕາປະຈຳອາທິດນີ້ ເພີ່ມຂຶ້ນ 0,29% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີ ຜ່ານມາ ເພີ່ມຂຶ້ນ 12,14%;
- ປະລິມານເງິນ M2 ເພີ່ມຂຶ້ນ 0,28% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 8,97%.

2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດ (02-08/11/2018) ເຫັນວ່າ ທທກ ຊື້ເງິນໂດລາສຸດທິ 4,19 ລ້ານໂດລາ (ໃນນີ້ຊື້ເງິນໂດລາໄດ້ 24,49 ລ້ານໂດລາ ແລະ ຂາຍເງິນໂດລາໄດ້ 20,30 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 257,65 ລ້ານບາດ (ໃນນີ້ຊື້ເງິນບາດໄດ້ 127,97 ລ້ານບາດ ແລະ ຂາຍເງິນບາດໄດ້ 385,14 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າເງິນໂດລາ ຫຼຸດລົງ 41,21% ແລະ ເງິນບາດ ຫຼຸດລົງ 28,29%;
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ດັດສົມເງິນໂດລາສຸດທິໃຫ້ທະນາຄານທຸລະກິດ ຈຳນວນ 1,40 ລ້ານໂດລາ ແລະ ດັດສົມເງິນບາດສຸດທິ ຈຳນວນ 10,87 ລ້ານບາດ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ມີປະລິມານຊື້-ຂາຍເງິນໂດລາ ຈຳນວນ 4,80 ລ້ານໂດລາ ແລະ ເງິນບາດ ຈຳນວນ 85,00 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບພາກສ່ວນອື່ນໆເຫັນວ່າ: ບໍ່ມີການຊື້-ຂາຍເງິນໂດລາ ແລະ ເງິນບາດ.

---

1% ການປ່ຽນແປງຂອງອັດຕາແລກປ່ຽນທະນາຄານທຸລະກິດ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ

ສະພາບການຊື້-ຂາຍເງິນຕາຕ່າງປະເທດ (ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 26/10-01/11/2018 | | ອາທິດນີ້ 02-08/11/2018 | | (%) +ເພີ່ມຂຶ້ນ/-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| **1. ການຊື້ເງິນຕາຕ່າງປະເທດ** | **31.83** | **147.97** | **24.49** | **127.49** | **-23.11%** | **-13.84%** |
| - ທ/ຄທຸລະກິດລັດ | 8.18 | 32.49 | 10.50 | 83.01 | 28.36% | 155.49% |
| - ທ/ຄທຸລະກິດອື່ນໆ | 23.65 | 115.48 | 13.99 | 44.48 | -40.90% | -61.48% |
| **2. ການຂາຍເງິນຕາຕ່າງປະເທດ** | **44.32** | **566.32** | **20.30** | **385.14** | **-54.22%** | **-32.06%** |
| - ທ/ຄທຸລະກິດລັດ | 16.52 | 146.53 | 13.51 | 125.51 | -18.22% | -14.35% |
| - ທ/ຄທຸລະກິດອື່ນໆ | 27.80 | 419.79 | 6.79 | 259.63 | -75.59% | -38.24% |
| **ຊື້-ຂາຍສຸດທິ ທທກ** | **-12.49** | **-418.35** | **4.19** | **-257.65** | **-133.55%** | **-38.50%** |
| - ຜິດດ່ຽງຊື້-ຂາຍ | -39.24% | -282.73% | 17.11% | -202.09% | -143.62% | -28.62% |
| **- ມູນຄ່າການຊື້-ຂາຍ** | **76.15** | **714.29** | **44.79** | **512.63** | **-41.21%** | **-28.29%** |
| **3. ການຊື້-ຂາຍ ລະຫວ່າງ ທຫລ ກັບ ທທກ** | **-17.98** | **-147.43** | **-1.40** | **-10.87** | | |
| - ທຫລ ຊື້ຈາກ ທທກ | 0.30 | 0.00 | 0.10 | 0.00 | | |
| - ທຫລ ຂາຍໃຫ້ ທທກ | 18.28 | 147.43 | 1.50 | 10.87 | | |
| **4. ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ** | **24.98** | **80.00** | **4.80** | **85.00** | | |
| **5. ທຫລ ກັບ ພາກສ່ວນອື່ນໆ** | **0,00** | **0,00** | **0,00** | **0,00** | | |
| -ທຫລ ຊື້ຈາກພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |
| -ທຫລ ຂາຍໃຫ້ພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |

**2.4 ສະພາບອັດຕາເງິນເຟີ້**

ອັດຕາເງິນເຟີ້ໃນເດືອນ 11/2018 ຄາດວ່າຈະຢູ່ໃນລະດັບ 3,17%.

**2.5 ການຄຸ້ມຄອງເງິນຕາຕ່າງປະເທດ**

ທະນາຄານແຫ່ງ ສປປ ລາວ ໄດ້ມີກະແສເງິນໄຫຼອອກສຸດທິ ຜ່ານລະບົບທະນາຄານ ຈຳນວນ 7,05 ລ້ານໂດລາສະຫະລັດ. ໃນນັ້ນ, ປະຈຳອາທິດວັນທີ (02-08/11/2018) ໃນນັ້ນ, ສຳລັບກະແສເງິນໄຫຼອອກ ມີຈຳນວນ 199,72 ລ້ານໂດລາສະຫະລັດ (ຊຶ່ງສ່ວນໃຫຍ່ແມ່ນຊຳລະຄ່ານຳເຂົ້າສິນຄ້າ ຈຳນວນ 160,75 ລ້ານໂດລາສະຫະລັດ, ຊຳລະເງິນກູ້ພາກລັດຖະບານ ຈຳນວນ 15,62 ລ້ານໂດລາສະຫະລັດ ແລະ ຊຳລະຄ່າບໍລິການ ຈຳນວນ 9,50 ລ້ານໂດລາສະຫະລັດ) ແລະ ສຳລັບກະແສເງິນໄຫຼເຂົ້າ ແມ່ນມີຈຳນວນ 192,67 ລ້ານໂດລາສະຫະລັດ (ຊຶ່ງສ່ວນໃຫຍ່ແມ່ນຮັບຈາກການກູ້ຢືມຂອງຫົວໜ່ວຍທຸລະກິດ ຈຳນວນ 102,19 ລ້ານໂດລາສະຫະລັດ, ຮັບຈາກການສົ່ງອອກສິນຄ້າ ຈຳນວນ 49,65 ລ້ານໂດລາສະຫະລັດ, ຮັບຄ່າບໍລິການ ຈຳນວນ 19,60 ລ້ານໂດລາສະຫະລັດ ແລະ ຮັບຈາກເງິນລົງທຶນໂດຍກົງຈາກຕ່າງປະເທດ ຈຳນວນ 16,24 ລ້ານໂດລາສະຫະລັດ).

**3. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ**

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ຈຳນວນ 545 ສະບັບ ທຽບໃສ່ອາທິດຜ່ານມາ ຫຼຸດລົງ 233 ສະບັບ ເທົ່າກັບ 29,95% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 287,09 ຕື້ກີບ ທຽບໃສ່ອາທິດຜ່ານມາ ຫຼຸດລົງ 59,61 ຕື້ກີບ ເທົ່າກັບ 17,19%.

- ການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (02-08/11/2018) ມີທັງໝົດ 3.922 ຄັ້ງ ເຊິ່ງປະກອບມີດັ່ງນີ້:

- **ສະກຸນເງິນກີບ:** ມີການເຄື່ອນໄຫວຈຳນວນ 3.913 ຄັ້ງ, ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າ ຫຼຸດລົງ ຈຳນວນ 150 ຕື້ກີບ ຈາກ 1,235,79 ຕື້ກີບ ມາເປັນ 1,085,31 ຕື້ກີບ ເທົ່າກັບ 12,17%;

- **ກະຊວງການເງິນ:** ມີການເຄື່ອນໄຫວຈຳນວນ 9 ຄັ້ງ, ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າ ເພີ່ມຂຶ້ນ ຈຳນວນ 0,27 ຕື້ກີບ ຈາກ 67,97 ຕື້ກີບ ມາເປັນ 68,24 ຕື້ກີບ ເທົ່າກັບ 0,39%.

**4. ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ**

ດັດຊະນີຕະຫຼາດຫຼັກຊັບລາວໃນອາທິດນີ້ປິດຢູ່ທີ່ 835,68 ຈຸດ ຫຼຸດລົງ ຈາກ 838,20 ຈຸດ ຫຼື ເທົ່າກັບ 0,30% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດນີ້ ມີປະລິມານຊື້-ຂາຍຮຸ້ນທັງໝົດ 330.400 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1.325,89 ຕື້ກີບ ເພີ່ມຂຶ້ນ 50,32% ທຽບໃສ່ອາທິດຜ່ານມາ, ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 81,01% ຂອງມູນຄ່າການຊື້-ຂາຍທັງໝົດ. ສາເຫດການຫຼຸດລົງຂອງດັດຊະນີ ຕລຊລ ແມ່ນມາຈາກການປັບຕົວຫຼຸດລົງຂອງລາຄາຮຸ້ນ EDL-Gen ແລະ MHTL,ສ່ວນສາເຫດການເພີ່ມຂຶ້ນຂອງມູນຄ່າການຊື້-ຂາຍຮຸ້ນ EDL-Gen ໃນອາທິດນີ້ແມ່ນເນື່ອງມາຈາກການເຂົ້າມາຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດເປັນສ່ວນໃຫຍ່.

➢ **ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)**

| ບໍລິສັດ | ອາທິດກ່ອນ | | | ອາທິດນີ້ | | | %ປ່ຽນແປງ | | |
|---|---|---|---|---|---|---|---|---|---|
| | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) | ຈຳນວນ | ມູນຄ່າການຊື້-ຂາຍ | ລາຄາປ່ຽນແປງ (%) |
| **BCEL** | 95.600 | 535.385.000 | 5.700 | **43.000** | **240.760.000** | **5.700** | -55,02 | -55,03 | - |
| **EDL-GEN** | 39.700 | 161.625.000 | 4.100 | **238.200** | **958.295.000** | **4.050** | 500,00 | 492,91 | -1,22 |
| **LWPC** | - | - | 8.000 | - | - | **8.000** | - | - | - |
| **PTL** | - | - | 1.500 | **500** | **750.000** | **1.500** | - | - | - |
| **SVN** | - | - | 1.500 | | | **1.500** | - | - | - |
| **PCD** | - | - | 1.100 | **200** | **240.000** | **1.200** | - | - | 9,09 |
| **LCC** | 1.500 | 2.820.000 | 1.900 | **900** | **1.740.000** | **1.900** | -40,00 | -38,30 | - |
| **MHTL** | 63.400 | 180.765.000 | 2.850 | **43.000** | **120.600.000** | **2.750** | -32,18 | -33,28 | -3,51 |
| **LAT** | 2.000 | 1.425.000 | 750 | **4.600** | **3.510.000** | **750** | 130,00 | 146,32 | - |
| ທັງໝົດ | 202.200 | 882.020.000 | | **330.400** | **1.325.895.000** | | 63,40 | 50,32 | |

**5. ວຽກງານອື່ນໆທີ່ພົ້ນເດັ່ນ.**

- **ສຳເລັດການເຂົ້າຮ່ວມກອງປະຊຸມ, ຈັດກອງປະຊຸມ ແລະ ພິທີຕ່າງໆ:** ❶ ກອງປະຊຸມປຶກສາຫາລືກ່ຽວກັບການດຳເນີນການປັບປຸງໂຄງສ້າງ ທພລ ແລະ ທສກ , ❷ ກອງປະຊຸມປຶກສາຫາລືການຮ່ວມມືດ້ານເສດຖະກິດຂອບແມ່ນ້ຳຂອງ, ❸ກອງປະຊຸມຄະນະຮັບຜິດຊອບຈັດຕັ້ງສະ ເຫຼີມສະຫຼອງວັນສ້າງຕັ້ງກອງທັບປະຊາຊົນລາວ ຄົບຮອບ 70 ປີ, ❹ ກອງປະຊຸມການລົງກວດກາ ແລະ ປັບປຸງສິດນຳໃຊ້ຄອມພິວເຕີ, ❺ກອງປະຊຸມກ່ຽວກັບວຽກງານກອງທຶນໂຄງການຂອງໂຄງການລ້ຽງສັດເພື່ອຜະລິດເປັນສິນຄ້າຢູ່ 04 ແຂວງ ພາກເໜືອຂອງ ສປປ ລາວ ຮ່ວມກັບກະຊວງກະສິກຳ;❻ ກອງປະຊຸມຄະນະຮັບຜິດຊອບຈັດການປະມູນອຸປະກອນລະບົບພື້ນຖານໂຄງລ່າງໄອທີຂອງ ທຫລ.

- ກະກຽມການເຂົ້າຢັ້ງມຂໍ່າມັບຂອງນັກລົງທຶນປະເພດສະຖາບັນຕ່າງປະເທດ;

**III. ແຜນວຽກຈຸດສຸມອາທິດຕໍ່ໄປ:**

- ສືບຕໍ່ດໍາເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນທີ່ໄດ້ກໍານົດໄວ້ໃນແຜນວຽກປະຈໍາປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ; ສືບຕໍ່ຕິດຕາມການຈັດຕັ້ງປະຕິບັດນະໂຍບາຍອັດຕາດອກເບັ້ຍຂອງ ທຫລ ແລະ ການສ້າງໂປຼແກຼມຕິດຕາມນະໂຍບາຍດັ່ງກ່າວຢ່າງໃກ້ຊິດ;

- ສືບຕໍ່ຕິດຕາມ, ກວດກາການເຄື່ອນໄຫວຂອງບັນດາທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ທີ່ໄດ້ຮັບອະນຸຍາດຈາກ ທຫລ ພ້ອມທັງສືບຕໍ່ຮ່ວມເປັນຄະນະສະເພາະກິດລົງກວດກາການເຄື່ອນໄຫວຮ້ານແລກປ່ຽນເງິນຕາ ຢ່າງໃກ້ຊິດ;

- ສືບຕໍ່ຄົ້ນຄວ້າ ນໍາສະເໜີແຜນພິມເງິນ ເພື່ອກະຕຸ້ນເສດຖະກິດ ຕາມແຜນເງິນຕາປະຈໍາປີ 2019 ທີ່ໄດ້ກໍານົດໄວ້;

- ສືບຕໍ່ຕິດຕາມການທົດລອງ ລະບົບອັດຕາດອກເບ້ຍສະເລ່ຍຖ່ວງນໍ້າໜັກ ແລະ ຕິດຕັ້ງໂປຣແກຣມດໍາເນີນທຸລະກໍາຕະຫຼາດລະຫວ່າງທະນາຄານ ໄລຍະ 02 ພ້ອມທັງກະກຽມແຜນຈັດກອງປະຊຸມເຜີຍແຜ່ວຽກງານ CIB ໃຫ້ບັນດາພາກສ່ວນທີ່ກ່ຽວຂ້ອງ;

- ສືບຕໍ່ກະກຽມເງື່ອນໄຂໃຫ້ແກ່ກອງປະຊຸມສະພາບໍລິຫານ ທຫລ ຄັ້ງທີ II ປີ 2018;

- **ກະກຽມຈັດກອງປະຊຸມ, ເຂົ້າຮ່ວມກອງປະຊຸມ ແລະ ພິທີຕ່າງໆ:** ❶ ກອງປະຊຸມລັດຖະບານສະໄໝສາມັນ ປະຈໍາເດືອນ ພະຈິກ 2018, ❷ ກອງປະຊຸມປຶກສາຫາລືກ່ຽວກັບການຄຸ້ມຄອງ ແລະ ໃຫ້ບໍລິການລະບົບ SWIFT, ❸ ກອງປະຊຸມຄະນະກະກຽມງານກິລາ ລະຫວ່າງ ທະນາຄານແຫ່ງ ສປປ ລາວ ແລະ ທະນາຄານແຫ່ງລັດຫວຽດນາມ, ❹ ກອງປະຊຸມນໍາສະເໜີໂຄງການກອງທຶນສົ່ງເສີມການເຂົ້າຫາແຫຼ່ງທຶນ (LAFF), ❺ ເປັນປະທານກອງປະຊຸມປະກອບຄໍາເຫັນຕໍ່ຮ່າງບົດແນະນໍາ ກ່ຽວກັບການຄົ້ນຄວ້າບໍລິຫານ ສໍາລັບບໍລິສັດຈົດທະບຽນ, ❻ ກອງປະຊຸມປຶກສາຫາລືຮ່ວມກັບບັນດາກົມກ່ຽວຂ້ອງໃນ ທຫລ ຕິດພັນກັບການຂໍລົບລ້າງລັດຖະບັນຍັດ ເລກທີ 001/ປປທ, ລົງວັນທີ 28 ທັນວາ 2010 ວ່າດ້ວຍການກໍານົດອັດຕາອາກອນກໍາໄລ ແລະ ຄ່າທໍານຽມ ສໍາລັບການດໍາເນີນທຸລະກິດໃນຕະຫຼາດຫຼັກຊັບ, ❼ ກອງປະຊຸມປຶກສາຫາລືປະກອບຄໍາເຫັນໃສ່ຮ່າງບົດແນະນໍາກ່ຽວກັບ ການຄຸ້ມຄອງບໍລິຫານສໍາລັບບໍລິສັດຈົດທະບຽນໃນ ສປປ ລາວ ແລະ ❽ ກອງປະຊຸມປຶກສາຫາລື ກ່ຽວກັບຄ່າທໍານຽມໃນການຊື້-ຂາຍພັນທະບັດລັດຖະບານ.

- ເຂົ້າຮ່ວມພິທີເຊັນສັນຍາແຕ່ງຕັ້ງທີ່ປຶກສາດ້ານການເງິນ ແລະ ຕົວແທນຈໍາໜ່າຍພັນທະບັດລັດຖະບານ ຜ່ານຕະຫຼາດຫຼັກຊັບລາວ ລະຫວ່າງ ກະຊວງການເງິນ ກັບ ບັນດາບໍລິສັດຫຼັກຊັບ.

ຫົວໜ້າຫ້ອງການ

ຫ້ອງການ

ເພັດສະຖາພອນ ແກ້ວວົງວິຈິດ